# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I.  ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ..................................01 - 05

II. ການເຄື່ອນໄຫວຂອງ ການນຳຂັ້ນສູງ.........................................................................06 - 07

III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................08 - 13

IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ...........................................................13 - 14

V. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ..............................................14 - 15



ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນມີນາ 2026



ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 10 ມີນາ 2026, ທີ່ ສຳນັກງານສູນກາງພັກ, ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ເປັນປະທານ ກອງປະຊຸມປະກາດການສ້າງຕັ້ງ ສະພາທິດສະດີສູນກາງພັກກອມມູນິດຫວຽດນາມ ສະໄໝ 2026-2031. ໃນກອງປະຊຸມ, ສະຫາຍ ຮວາງ ຈຸງ ຢຸ້ງ, ກຳມະການສູນກາງພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ໄດ້ຂຶ້ນຜ່ານ ຂໍ້ຕົກລົງຂອງກົມການເມືອງ ສະບັບເລກທີ 10-QD/TW, ລົງວັນທີ 06 ມີນາ 2026 ວ່າດ້ວຍ ການສ້າງຕັ້ງສະພາດັ່ງກ່າວ. ສະພາທິດສະດີສູນກາງພັກ ເປັນອົງການຈັດຕັ້ງ ທີ່ຂຶ້ນກັບສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ, ມີບົດບາດໜ້າທີ່ຊ່ວຍ ສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ ເຮັດໜ້າທີ່ໃຫ້ຄຳປຶກສາແກ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໂດຍສະເພາະຕໍ່ ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ກ່ຽວກັບວຽກງານທິດສະດີການເມືອງ, ເປັນພື້ນຖານໃຫ້ແກ່ການກຳນົດ, ເຮັດໃຫ້ສຳເລັດ ແລະ ພັດທະນາແນວທາງຂອງພັກ; ບັນດາໂຄງການ, ແຜນການ, ຫົວຂໍ້ວິທະຍາສາດລະດັບຊາດ ກ່ຽວກັບ ທິດສະດີການເມືອງ, ຮັບໃຊ້ໂດຍກົງຕໍ່ວຽກງານນຳພາຂອງພັກ. ນອກນັ້ນ, ໄດ້ຜ່ານຂໍ້ຕົກລົງຂອງ ຄະນະເລຂາທິການສູນກາງພັກ ວ່າດ້ວຍ ການແຕ່ງຕັ້ງປະທານ, ຮອງປະທານ ແລະ ຄະນະສະພາທິດສະດີສູນກາງພັກຊຸດໃໝ່ (2026-2031), ໂດຍໄດ້ແຕ່ງຕັ້ງ ສະຫາຍ ຫງວຽນ ຊວນ ຖັງ, ອະດີດກຳມະການກົມການເມືອງສູນກາງພັກ ສະໄໝ XIII ສືບຕໍ່ເປັນປະທານສະພາທິດສະດີສູນກາງພັກ; ແຕ່ງຕັ້ງ ສະຫາຍ ດວານ ມິງ ຮວັນ, ກຳມະການກົມການເມືອງ, ຫົວໜ້າສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ ເປັນຮອງປະທານຜູ້ປະຈຳການສະພາ; ສະຫາຍ ເລວັນເລີ້ຍ, ກຳມະການສູນກາງພັກ, ປະທານສະຖາບັນບັນດິດວິທະຍາສາດ-ສັງຄົມ ຫວຽດນາມ ເປັນຮອງປະທານ; ສະຫາຍ ຫງວຽນ ແມ້ງ ຮຸ່ງ, ຮອງຫົວໜ້າສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ ເປັນເລຂາທິການສະພາທິດສະດີສູນກາງພັກ ແລະ ແຕ່ງຕັ້ງກຳມະການສະພາທິດສະດີສູນກາງພັກ ຈຳນວນ 34 ສະຫາຍ. ສະຫາຍ ໂຕເລີມ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ ກໍຄືການປະກອບສ່ວນອັນສຳຄັນຂອງ ສະພາທິດສະດີສູນກາງພັກ ສະໄໝ 2021-2026 ແລະ ໄດ້ຊົມເຊີຍການປັບປຸງກົງຈັກ ແລະ ການປະກາດແຕ່ງຕັ້ງ ສະພາທິດສະດີສູນກາງພັກຊຸດໃໝ່ (ສະໄໝ 2026-2031).

ວັນທີ 16 ມີນາ 2026, ທີ່ສຳນັກງານສູນກາງພັກ, ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ສະຫາຍ ຫວາງ ອີ້, ລັດຖະມົນຕີກະຊວງການຕ່າງປະເທດຈີນ; ສະຫາຍ ດົງ ຈຸ່ນ, ລັດຖະມົນຕີກະຊວງປ້ອງກັນປະເທດຈີນ ແລະ ສະຫາຍ ຫວັງ ສຽວຫົງ, ລັດຖະມົນຕີກະຊວງຕຳຫຼວດຈີນ ເນື່ອງໃນໂອກາດທີ່ສອງປະເທດ ພວມຈັດຕັ້ງຍຸດທະສາດ 3+3 ລະດັບລັດຖະມົນຕີ, ກະຊວງການຕ່າງປະ ເທດ, ກະຊວງປ້ອງກັນປະເທດ ແລະ ກະຊວງຕຳຫຼວດ ຫວຽດນາມ-ຈີນ ຄັ້ງທີ I. ສະຫາຍ ໂຕເລີມ ໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ ຄະນະຜູ້ແທນຂັ້ນສູງຂອງ ພັກ, ລັດ ສປ ຈີນ ທີ່ໄດ້ມາຢ້ຽມຢາມ ສສ ຫວຽດນາມ ໃນໂອກາດຮ່ວມກັນ ຈັດຕັ້ງການເຈລະຈາຍຸດທະສາດ 3+3 ຄັ້ງທຳອິດ, ພ້ອມທັງເນັ້ນໜັກຄວາມສຳຄັນຂອງກົນໄກນີ້ຕໍ່ກັບການປະກອບສ່ວນປັບປຸງຄວາມໄວ້ເນື້ອເຊື່ອໃຈດ້ານການເມືອງ, ເພີ່ມທະວີການຮ່ວມມືດ້ານຍຸດທະສາດ, ຊຸກຍູ້ການພົວພັນ ຫວຽດນາມ-ຈີນ ໃຫ້ພັດທະນາຢ່າງໝັ້ນຄົງ, ສະແດງໃຫ້ເຫັນຄວາມຮັບຜິດຊອບຂອງສອງປະເທດ ຕໍ່ການຮັກສາ ສັນຕິພາບ, ສະຖຽນລະພາບ ແລະ ພັດທະນາຂອງ ພາກພື້ນ ແລະ ໃນໂລກ. ບັນດາສະຫາຍລັດຖະມົນຕີຈີນ ຢືນຢັນວ່າ ຈະປະສານສົມທົບຢ່າງແໜ້ນແຟ້ນ ກັບບັນດາອົງການທຽບເທົ່າຂອງ ຫວຽດນາມ, ເພີ່ມທະວີການແບ່ງປັນ ທິດສະດີ ແລະ ພຶດຕິກຳກ່ຽວກັບການກໍ່ສ້າງພັກ, ການຄຸ້ມຄອງປະເທດ; ເຮັດໃຫ້ການຮ່ວມມືດ້ານ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຈັດຕັ້ງປະຕິບັດກົດໝາຍ, ການປ້ອງກັນ-ຕ້ານອາຊະຍາກຳ, ການຝຶກຊ້ອມຮ່ວມ; ຍົກລະດັບການຮ່ວມມືໃນຫຼາຍຂົງເຂດ, ໂດຍສະເພາະການຄ້າ, ການລົງທຶນ, ວິທະຍາສາດ-ເຕັກໂນໂລຊີ, ປັນຍາປະດິດ; ປັບປຸງພື້ນຖານສັງຄົມ ຂອງການພົວພັນສອງປະເທດ ຜ່ານການຊຸກຍູ້ ການຮ່ວມມືດ້ານທ່ອງທ່ຽວ, ການສຶກສາ-ກໍ່ສ້າງ, ການພົບປະແລກປ່ຽນປະຊາຊົນ; ສອງຝ່າຍ ສືບຕໍ່ແກ້ໄຂທຸກຄວາມບໍ່ລົງລອຍກັນໃຫ້ດີກວ່າເກົ່າ, ສອດຄ່ອງກັບລະດັບໃໝ່ ຂອງການພົວພັນສອງປະເທດ.

### 2) ພັກກອມມູນິດຈີນ

ກອງປະຊຸມຄັ້ງທີ IV ຂອງສະພາປະຊາຊົນແຫ່ງຊາດຈີນ ຊຸດທີ 14 ໄດ້ໄຂຂຶ້ນຢູ່ຫໍສະພາປະຊາຊົນ, ທີ່ນະຄອນຫຼວງປັກກິ່ງ ໃນວັນທີ 05 ມີນາ 2026. ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫ່ຍ, ປະທານປະເທດຈີນ ພ້ອມ

ດ້ວຍການນຳພັກ-ລັດ ເຂົ້າຮ່ວມພິທີໄຂກອງປະຊຸມດັ່ງກ່າວ.ຊຶ່ງກອງປະຊຸມ ຈະດຳເນີນເປັນເວລາ 08 ວັນ, ຜູ້ແທນສະພາປະຊາຊົນແຫ່ງຊາດຈີນ ທີ່ມາຈາກທ້ອງຖິ່ນຕ່າງໆ, ຊົນເຜົ່າຕ່າງໆ ແລະ ຂະແໜງການຕ່າງໆໃນທົ່ວປະເທດຈີນທັງໝົດ 2,700 ກວ່າສະຫາຍ ຈະຄົ້ນຄວ້າພິຈາລະນາບົດລາຍງານວຽກງານຂອງລັດຖະບານ, ສຳຫຼວດຮ່າງແຜນແມ່ບົດວ່າດ້ວຍ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີຄັ້ງທີ XV, ຄົ້ນຄວ້າພິຈາລະນາຮ່າງປະມວນກົດໝາຍວ່າດ້ວຍ ສິ່ງແວດລ້ອມທຳມະຊາດ, ຮ່າງກົດໝາຍ ວ່າດ້ວຍ ການສົ່ງເສີມຄວາມສາມັກຄີ ແລະ ຄວາມກ້າວໜ້າລະຫວ່າງຊົນເຜົ່າ ແລະ ຮ່າງກົດໝາຍວ່າດ້ວຍ ແຜນພັດທະນາແຫ່ງຊາດ, ຄົ້ນຄວ້າພິຈາລະນາບົດລາຍງານວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ຄົ້ນຄວ້າພິຈາລະນາຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2026 ພ້ອມດ້ວຍຮ່າງແຜນງົບປະມານຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແລະ ອື່ນໆ.

ວັນທີ 18-19 ມີນາ 2026, ກອງປະຊຸມ ຄັ້ງທີ 71 ຂອງ ໜ່ວຍງານພະລັງງານ ອົງການຮ່ວມມືເສດຖະກິດອາຊີປາຊີຟິກ ຫຼື APEC ໄດ້ຈັດຂຶ້ນຢູ່ ນະຄອນນານຊ່າງ, ແຂວງຈ່ຽງຊີ່, ສປ ຈີນ. ກອງປະຊຸມ ໄດ້ສະເໜີ 3 ຫົວຂໍ້ ທີ່ປິ່ນອ້ອມຂົງເຂດບູລິມະສິດ ເຊັ່ນ: **(1) ການບໍລິການພະລັງງານທີ່ມີຄຸນນະພາບສູງຢ່າງທົ່ວເຖິງ:** ຂໍ້ລິເລີ່ມໃຫ້ຮ່ວມກັນຊຸກຍູ້ການບໍລິການພະລັງງານທີ່ມີຄຸນນະພາບສູງໃຫ້ທົ່ວເຖິງ ຢູ່ໃນພາກພື້ນອາຊີ-ປາຊີຟິກ ດ້ວຍການພັດທະນາແບບມີສ່ວນຮ່ວມ, ປະສົມປະສານເຕັກໂນໂລຊີທີ່ຫຼາກຫຼາຍ, ການສ້າງຄວາມເຂັ້ມແຂງຢ່າງມີຈຸດສຸມ ແລະ ຮັດແໜ້ນການປະສານງານຢູ່ໃນພາກພື້ນ ເພື່ອຮັບປະກັນຜົນປະໂຫຍດຮ່ວມຂອງທຸກພາກສ່ວນໃນພາກພື້ນອາຊີ-ປາຊີຟິກ; **(2) ປັນຍາປະດິດ + ພະລັງງານ**: ຂໍ້ລິເລີ່ມໃນການຮ່ວມກັນຊຸກຍູ້ໃຫ້ນຳໃຊ້ປັນຍາປະດິດ ຊ່ວຍໃນການຄຸ້ມຄອງຈັດການພະລັງງານ ໂດຍຜ່ານການເຊື່ອມໂຍງເຊື່ອມຈອດໃນດ້ານຕ່າງໆ ເຊັ່ນ: ຍຸດທະສາດການພັດທະນາ, ກົດລະບຽບການຄຸ້ມຄອງ, ມາດຕະຖານເຕັກໂນໂລຊີ ແລະ ອື່ນໆ; **(3) ການຮ່ວມມືຄຸ້ມຄອງພະລັງງານຂອງອາຊີ-ປາຊີຟິກ:** ການເພີ່ມທະວີການປະສານສົມທົບ ເພື່ອຍົກສູງປະສິດທິຜົນ, ຄວາມໂປ່ງໃສ ແລະ ຄວາມຍືນຍົງ ໃນການຄຸ້ມຄອງພະລັງງານຢ່າງຮອບດ້ານ ໂດຍຜ່ານການເພີ່ມທະວີການສົມທົບການແລກປ່ຽນດ້ານນະໂຍບາຍ ແລະ ຂໍ້ມູນ ຮ່ວມກັນ, ການສ້າງຄວາມອາດສາມາດ ແລະ ການປະສານງານດ້ານຄວາມສ່ຽງ, ຊຸກຍູ້ໃຫ້ກາຍເປັນການຮ່ວມມືຮູບແບບໃໝ່ໃນພາກພື້ນທີ່ມີທ່າແຮງຊ່ວຍຍູ້ໜູນ ແລະ ພັດທະນາຢ່າງກົມກຽວກັນ.

3) **ພັກແຮງງານເກົາຫຼີ**

ວັນທີ 22 ມີນາ 2026, ສປປ ເກົາຫຼີ ໄດ້ຈັດກອງປະຊຸມສະພາປະຊາຊົນສູງສຸດ ຄັ້ງທີ 1 ຊຸດທີ XV ຂຶ້ນຢ່າງເປັນທາງການ ໂດຍການເປັນປະທານຂອງ ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ. ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆ ໂດຍແບ່ງເປັນ 6 ວາລະ ຄື: 1) ເລືອກຕັ້ງປະທານກິດຈະການແຫ່ງລັດ; 2) ເລືອກຕັ້ງອົງການການນຳຂັ້ນລັດ; 3) ເລືອກຕັ້ງຄະນະບໍລິຫານງານຂອງສະພາປະຊາຊົນສູງສຸດ; 4) ການປັບປຸງ ແລະ ເພີ່ມເຕີມລັດຖະທຳມະນູນສັງຄົມນິຍົມ; 5) ການຜັນຂະຫຍາຍຢ່າງລະອຽດ ກ່ຽວກັບແຜນການ 5 ປີ ແຫ່ງການພັດທະນາເສດຖະກິດແຫ່ງຊາດຂອງກອງປະຊຸມໃຫຍ່ ຄັ້ງທີ 9 ຂອງພັກ; 6) ການປະຕິບັດແຜນງົບປະມານແຫ່ງລັດ ປີ 2025 ແລະ ງົບປະມານແຫ່ງລັດ ປີ 2026. ພ້ອມດຽວກັນນັ້ນ, ກອງປະຊຸມ ໄດ້ເຫັນດີເລືອກເອົາ ສະຫາຍ ກິມ ເຈິງ ອຸນ ໃຫ້ສືບຕໍ່ດຳລົງຕຳແໜ່ງ ເປັນປະທານກິດຈະການແຫ່ງລັດ ແຫ່ງ ສປປ ເກົາຫຼີ, ດ້ວຍຄະແນນ 99.93 % ພ້ອມທັງເລືອກຕັ້ງຄະນະລັດຖະບານຊຸດໃໝ່.

4) **ພັກກອມມູນິດກູບາ**

ວັນທີ 01 ມີນາ 2026, ສະຫາຍ ມີເກນ ດຽດ ກາເນັນສ, ເລຂາທິການທີໜຶ່ງ, ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ.ກູບາ ໄດ້ເປັນປະທານກອງປະຊຸມ ຄະນະລັດຖະບານ ແລະ ໄດ້ຮຽກຮ້ອງໃຫ້ບັນດາກະຊວງ, ອົງການ ຮີບດ່ວນປັບປຸງສິ່ງທີ່ຈຳເປັນ ເພື່ອຮັບມືກັບມາດຕະການປິດລ້ອມ ຂອງ ສ.ອາເມຣິກາ, ຊຶ່ງປັດຈຸບັນ ສ.ກູບາ ກຳລັງປະເຊີນກັບການຂວ້ຳບາດທາງດ້ານເສດຖະກິດທີ່ຮ້າຍແຮງທີ່ສຸດ, ລວມທັງການຂາດແຄນສິນຄ້າອຸປະໂພກ-ບໍລິໂພກ ແລະ ພະລັງງານ. ສະຫາຍ ໄດ້ກ່າວຕື່ມວ່າ ການປະຕິຮູບແບບແຜນການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດ ມີຄວາມຈຳເປັນ ແລະ ຮີບດ່ວນເພື່ອການປ່ຽນຈາກທິດສະດີ ໄປສູ່ການປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ ແລະ ໄດ້ເນັ້ນໜັກເຖິງຄວາມຈຳເປັນທີ່ຈະຕ້ອງແກ້ໄຂແບບແຜນຂອງການເຮັດວຽກ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາມາດຕະການທີ່ໄດ້ຕົກລົງກັນ, ຖ້າການປະຕິຮູບເສດຖະກິດສຳເລັດ ກໍຈະສາມາດແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນພາຍໃນປະເທດໄດ້ ແລະ ຈະເປັນການຟື້ນຟູສະຖຽນລະພາບທາງເສດຖະກິດ ແລະ ການເມືອງ, ຫຼຸດຜ່ອນຜົນກະທົບ ແລະ ເສີມສ້າງລະບົບສັງຄົມນິຍົມ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ສະພາບການເມືອງພາຍໃນມຽນມາ:** ວັນທີ 16 ມີນາ 2026, ມຽນມາ ໄດ້ເປີດກອງປະຊຸມລັດຖະສະພາເປັນຄັ້ງທຳອິດໃນຮອບ 05 ປີ, ນັບແຕ່ປີ 2021 ເປັນຕົ້ນມາ. ກອງປະຊຸມດັ່ງກ່າວ ເກີດຂຶ້ນພາຍຫຼັງສຳເລັດເລືອກຕັ້ງທົ່ວໄປໃນຂອບເຂດທົ່ວປະເທດ ໃນໄລຍະທ້າຍປີ 2025 ຫາຕົ້ນປີ 2026, ຊຶ່ງພັກ Union Solidarity and Development Party (USDP) ທີ່ໄດ້ຮັບການສະໜັບສະໜູນຈາກກອງທັບມຽນມາ ສາມາດຍາດໄດ້ຈຳນວນບ່ອນນັ່ງສ່ວນຫຼາຍໃນສະພາ. ພ້ອມນັ້ນ, ທ່ານ ອູ ຄິນ ຢີ (U Khin Yi), ປະທານພັກ USDP ແລະ ອະດີດນາຍພົນ ໄດ້ຖືກເລືອກໃຫ້ເປັນປະທານສະພາຕ່ຳ. ສຳລັບສະພາສູງ (Amyotha Hluttaw) ແມ່ນມີກຳນົດເປີດກອງປະຊຸມໃນວັນທີ 18 ມີນາ 2026. ຫຼັງຈາກນັ້ນ, ລັດຖະສະພາທັງສອງ ຈະດຳເນີນການເລືອກຕັ້ງປະທານາທິບໍດີ ຄົນໃໝ່ ເພື່ອສ້າງຕັ້ງລັດຖະບານຕໍ່ໄປ, ໂດຍຫຼາຍຝ່າຍຄາດການວ່າ ພົນເອກອາວຸໂສ ມິນ ອ່ອງ ຫຼ່າຍ ຈະກ້າວຂຶ້ນຮັບຕຳແໜ່ງນີ້. ນັກວິເຄາະ ເຫັນວ່າ: ການເປີດກອງປະຊຸມຄັ້ງນີ້ ເປັນຂັ້ນຕອນສຳຄັນຂອງການຈັດຕັ້ງລັດຖະບານຊຸດໃໝ່ ແລະ ການເລືອກປະທານາທິບໍດີ ພາຍໃຕ້ລັດຖະສະພາຊຸດໃໝ່, ທັງເປັນສ່ວນສຳຄັນໃນການຟື້ນຟູຄວາມເຊື່ອໝັ້ນຂອງການປັບປຸງລັດຖະທຳມະນູນຂຶ້ນໃໝ່ອີກຄັ້ງ ພາຍຫຼັງທີ່ຄະນະຣັກສາການຈະສຳເລັດການປະຕິບັດໜ້າທີ່ບໍລິຫານງານຫຼັງຈາກນີ້, ຊຶ່ງຖ້າຫາກ ມຽນມາສາມາດຈັດຕັ້ງລັດຖະບານຊຸດໃໝ່ ແລະ ອອກນະໂຍບາຍໄດ້ຢ່າງມີສະຖຽນລະພາບ ແລະ ເປັນທີ່ຍອມຮັບທົ່ວສັງຄົມກໍຈະມີຜົນໂດຍກົງຕໍ່ການບໍລິຫານງານພາຍໃນປະເທດ ແລະ ການພົວພັນຮ່ວມມືກັບບັນດາປະເທດຕ່າງໆ ໂດຍສະເພາະບັນດາປະເທດສະມາຊິກອາຊຽນ ແລະ ອາດເປັນການຊ່ວຍຫຼຸດຜ່ອນແຮງກົດດັນ ຈາກບັນດາປະເທດຕາເວັນຕົກ ໄດ້ໃນລະດັບໃດໜຶ່ງ.

**ສະພາບການຢູ່ແຫຼມເກົາຫຼີ:** ວັນທີ 09 ມີນາ 2026, ກອງທັບ ສ. ເກົາຫຼີ ໄດ້ດຳເນີນການຝຶກຊ້ອມຮົບຮ່ວມປະຈຳປີກັບ ສ.ອາເມຣິກາ ທີ່ມີຊື່ວ່າ Freedom Shield 2026 ເປັນເວລາ 11 ວັນ ນັບແຕ່ວັນທີ 09-19 ມີນາ 2026 ໂດຍເນັ້ນໃສ່ການຝຶກຊ້ອມ ຢູ່ ພາກສະໜາມ, ສູນບັນຊາການທາງທະເລ ແລະ ມີທະຫານ ສ.ເກົາຫຼີ ເຂົ້າຮ່ວມທັງໝົດ 18,000 ຄົນ, ຊຶ່ງ ສ.ເກົາຫຼີ ໄດ້ໃຫ້ເຫດຜົນໃນການຊ້ອມຮົບຮ່ວມຄັ້ງນີ້ ແມ່ນເພື່ອຝຶກຊ້ອມຄວາມເຂັ້ມແຂງດ້ານການທະຫານຂອງສອງຝ່າຍ. ຂະນະດຽວກັນ ສປປ ເກົາຫຼີ ກໍໄດ້ທົດລອງການຍິງລູກສອນໄຟ ທີ່ສາມາດຕິດຫົວຮົບນິວເຄຼຍຈາກເຮືອ Choe Hyon ທີ່ມີນ້ຳໜັກ 5,000 ໂຕນ ເພື່ອຕອບໂຕ້ການຊ້ອມຮົບຮ່ວມປະຈຳປີ ຂອງ ສ. ເກົາຫຼີ ແລະ ສ.ອາເມຣິກາ. ພ້ອມທັງ ໄດ້ຍິງລູກສອນໄຟ ຂະໜາດໃຫຍ່ 600 ມມ ປະມານ 10 ລູກ ລົງສູ່ທະເລຍີ່ປຸ່ນ (East Sea) ໂດຍມີ ທ່ານ ກິມ ເຈີງ ອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ພ້ອມດ້ວຍລູກສາວ ໄດ້ເຂົ້າຮ່ວມສັງເກດການທົດລອງຄັ້ງນີ້.

**ເນປານ ໄດ້ຈັດການເລືອກຕັ້ງທົ່ວໄປ:** ໃນວັນທີ 05 ມີນາ 2026, ການເລືອກຕັ້ງຄັ້ງທຳອິດ ນັບແຕ່ເກີດການປະທ້ວງຄັ້ງໃຫຍ່ ໂດຍການນຳພາຂອງກຸ່ມຊາວໜຸ່ມ Gen Z ໃນເດືອນກັນຍາ 2025 ເປັນຕົ້ນມາ ໂດຍມີປະຊາຊົນເນປານ ເກືອບ 19 ລ້ານຄົນ ຈາກທັງໝົດ 30 ລ້ານຄົນ, ກວມເອົາໄວໜຸ່ມ 01 ລ້ານຄົນ ໄດ້ອອກໄປໃຊ້ສິດເລືອກຕັ້ງເອົາສະມາຊິກສະພາຕ່ຳ 275 ບ່ອນນັ່ງ ຈາກຜູ້ສະໝັກກວ່າ 4,300 ຄົນ (ເລືອກຕັ້ງຕາມລະບົບເຂດ 165 ບ່ອນນັ່ງ) ແລະ (ເລືອກຕາມລະບົບບັນຊີລາຍຊື່ 110 ບ່ອນນັ່ງ). ຜົນການເລືອກຕັ້ງ ແມ່ນພັກ Rastriya Swatantar ນຳໂດຍ ທ່ານ Baten Shah, ເປັນຜູ້ນຳທີ່ອາຍຸຍັງນ້ອຍ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ ດ້ວຍບ່ອນນັ່ງ 182 ບ່ອນນັ່ງໃນສະພາຕ່ຳ (ເພີ່ມຂຶ້ນ 162 ບ່ອນນັ່ງ ທຽບໃສ່ການເລືອກຕັ້ງປີ 2022) ຮອງລົງມາແມ່ນພັກ Nepali Congress, ຜູ້ນຳຄົນລຸ້ນໃໝ່ ໄດ້ 38 ບ່ອນນັ່ງ (ຫຼຸດລົງ 51 ບ່ອນນັ່ງ); ສ່ວນພັກ CPN (UML) ຫຼື The Communist Party of Nepal ຂອງທ່ານ K.P Shama, ອະດີດນາຍົກລັດຖະມົນຕີທີ່ຖືກຂັບໄລ່ ແລະ ພັກ Nepali Communist Party ໄດ້ບ່ອນນັ່ງເປັນອັນດັບ 3 ແລະ 4 ຄື 25 ບ່ອນນັ່ງ (ຫຼຸດລົງ 53 ບ່ອນນັ່ງ) ແລະ 17 ບ່ອນນັ່ງ (ຫຼຸດລົງ 28 ບ່ອນນັ່ງ) ຕາມລຳດັບ. ສະແດງເຖິງການປ່ຽນອຳນາດການເມືອງຂອງເນປານ ພາຍຫຼັງການປະທ້ວງຢ່າງນອງເລືອດ ຂັບໄລ່ລັດຖະບານໃນໄລຍະເດືອນກັນຍາ 2025 ຜ່ານມາ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ**: ຄວາມຂັດແຍ່ງລະຫວ່າງ ສອງຝ່າຍ ໄດ້ກ້າວເຂົ້າສູ່ປີທີ 05 (ຫຼັງຈາກຄົບຮອບ 04 ປີ ໃນວັນທີ 24 ກຸມພາ 2026), ສອງຝ່າຍ ຍັງຄົງສືບຕໍ່ໂຈມຕີ ຢ່າງຕໍ່ເນື່ອງ, ວັນທີ 07 ມີນາ 2026, ກອງທັບຣັດເຊຍ ໄດ້ດຳເນີນການໂຈມຕີໂຮງງານອຸດສາຫະກຳທາງການທະຫານ, ໂຄງສ້າງພື້ນຖານດ້ານການ

ຂົນສົ່ງທາງການທະຫານ ແລະ ໂຄງສ້າງດ້ານພະລັງງານ ໃນຫຼາຍຕົວເມືອງຂອງ ອູແກຣນ. ພ້ອມກັນນັ້ນ, ກອງທັບອູແກຣນ ໄດ້ທຳລາຍຢ່າງໜັກຕໍ່ ກອງທັບ ແລະ ຍຸດໂທປະກອນຂອງຣັດເຊຍ ໃນຫຼາຍພື້ນທີ່ ໂດຍສະເພາະຈຸດຄວບຄຸມໂດຣນ, ລະບົບປືນໃຫຍ່ ແລະ ສາມາດສະກັດໂດຣນຂອງ ຣັດເຊຍ ໄດ້ຫຼາຍກວ່າ 1800 ກວ່າລຳ. ທ່ານ ວາລາດີເມຍ ເຊເລັນສະກີ, ປະທານາທິບໍດີອູແກຣນ ໄດ້ກ່າວໃນວັນທີ 09 ມີນາ 2026 ວ່າ ອູແກຣນ ພ້ອມແລ້ວ ສຳລັບການເຈລະຈາສັນຕິພາບຄັ້ງໃໝ່ ກັບຣັດເຊຍ ທີ່ສະໜັບສະໜູນໂດຍ ສ.ອາເມຣິກາ, ແຕ່ປັດຈຸບັນ, ສ.ອາເມຣິກາ ໄດ້ຂໍໃຫ້ເລື່ອນການປະຊຸມ ເນື່ອງຈາກໄດ້ສຸມໃສ່ການເຮັດສົງຄາມກັບອີຣານ.

ກະຊວງປ້ອງກັນປະເທດຣັດເຊຍ ລະບຸວ່າ, ມີໂດຣນຂອງ ອູແກຣນ ທັງໝົດ 87 ລຳ ຖືກຍິງຕົກພາຍໃນດິນແດນຣັດເຊຍ, ໃນພາກພື້ນ ມົດສະກູ, Smolensk, Belgorod ແລະ Kursk. ສ່ວນການເຈລະຈາສັນຕິພາບ ລະຫວ່າງ ສ. ອາເມຣິກາ, ອູແກຣນ ແລະ ຣັດເຊຍ ໄດ້ຖືກໂຈະຊົ່ວຄາວທ່າມກາງສົງຄາມໃນພາກພື້ນຕາເວັນອອກກາງ. ຂະນະທີ່ ອູແກຣນ ແລະ ອັງກິດ ໄດ້ຕົກລົງຮ່ວມມືກັນ ຂາຍເຕັກໂນໂລຊີໂດຣນ ໃຫ້ກັບຕ່າງປະເທດ ໂດຍສະເພາະຂາຍໃຫ້ອູແກຣນ.

**ແອັດສະປາຍ ໄດ້ຈັດການເລືອກຕັ້ງທ້ອງຖິ່ນ**: ວັນທີ 15 ມີນາ 2026, ແອັດສະປາຍ ໄດ້ຈັດການເລືອກຕັ້ງທ້ອງຖິ່ນຂອງເຂດ Castilla y León, ຊຶ່ງຜົນຂອງການເລືອກຕັ້ງ ເຫັນວ່າ ພັກປະຊາຊົນ (PP) ສາມາດຍາດໄດ້ 33 ບ່ອນນັ່ງ ເພີ່ມຂຶ້ນ 02 ບ່ອນນັ່ງ; ສ່ວນພັກສັງຄົມນິຍົມ (PSOE), ພັກຂອງລັດຖະບານປັດຈຸບັນ ນຳໂດຍ ທ່ານ Pedro Sánchez, ນາຍົກລັດຖະມົນຕີ ໄດ້ 30 ບ່ອນນັ່ງ ເພີ່ມຂຶ້ນ 02 ບ່ອນນັ່ງ ແລະ ພັກຂວາຈັດ Vox ໄດ້ 14 ບ່ອນນັ່ງ ເພີ່ມຂຶ້ນ 01 ບ່ອນນັ່ງ. ຈາກຜົນຄະແນນດັ່ງກ່າວ ເຫັນວ່າ ພັກສັງຄົມນິຍົມ ສາມາດໄດ້ຄະແນນນິຍົມເພີ່ມຂຶ້ນ, ຊຶ່ງຜິດກັບການຄາດຄະເນຂອງຜູ້ຊ່ຽວຊານກ່ອນໜ້ານີ້. ບັນດາສາເຫດທີ່ເຮັດໃຫ້ພັກຂອງລັດຖະບານ ຍັງຢູ່ໃນອັນດັບ 2, ແມ່ນຍ້ອນ 1). ການວາງທ່າທີຂອງ ທ່ານ Sánchez, ນາຍົກລັດຖະມົນຕີ ຕໍ່ຕ້ານສົງຄາມ (Anti-war Stance) ລະຫວ່າງ ສ. ອາເມຣິກາ-ອິດສະຣາແອນ ກັບ ອີຣານ, ການປະທະກັນທາງວາຈາ ກັບປະທານາທິບໍດີ ໂດນັນ ທຣຳ ກ່ຽວກັບ ການນຳໃຊ້ຖານທັບຮ່ວມ ໃນແອັດສະປາຍ ໄດ້ຊ່ວຍປຸກລະດົມຜູ້ມີສິດເລືອກຕັ້ງຝ່າຍຊ້າຍ ໃຫ້ອອກມາໃຊ້ສິດສະໜັບສະໜູນພັກຂອງທ່ານ; 2).ການຟື້ນຕົວຈາກຄວາມປະລາໄຊ ກ່ອນໜ້ານີ້ ໃນການເລືອກຕັ້ງໃນເຂດ Extremadura (ທັນວາ 2025) ແລະ Aragón (ກຸມພາ 2026); 3). ຄວາມເຂັ້ມແຂງຂອງພັກຄູ່ແຂ່ງ ຄື ພັກປະຊາຊົນ ທີ່ຍັງຄົງເປັນພັກອັນດັບໜຶ່ງໃນຫຼາຍເຂດ ແລະ ໄດ້ຮັບໄຊຊະນະເປັນຄັ້ງທີ 3 ໃນຮອບ 3 ເດືອນ; 4). ຜົນກະທົບຈາກບັນຫາພາຍໃນ ເຖິງວ່າຈະມີການເຕີບໂຕທາງເສດຖະກິດທີ່ດີ, ແຕ່ຄວາມນິຍົມຂອງລັດຖະບານ Sánchez ຖືກບັ່ນທອນ ຍ້ອນຂ່າວການສໍ້ລາດບັງຫຼວງ ແລະ ຄວາມບໍ່ພໍໃຈຕໍ່ນະໂຍບາຍລະດັບຊາດໃນບາງພື້ນທີ່.

**4. ພາກພື້ນຕາເວັນອອກກາງ**

**ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ:** ນັບແຕ່ ສ.ອາເມຣິກາ-ອິດສະຣາແອນ ໄດ້ເປີດສາກໂຈມຕີອີຣານ ໃນວັນທີ 28 ກຸມພາ 2026 ເຮັດໃຫ້ຜູ້ນຳສູງສຸດຂອງ ອີຣານ ເສຍຊີວິດນັ້ນ ໄດ້ເຮັດໃຫ້ຄວາມຂັດແຍ່ງຮຸນແຮງຂຶ້ນ ຈົນກາຍເປັນຄວາມຂັດແຍ່ງລະດັບພາກພື້ນ ຕາເວັນອອກກາງ ເພາະນອກຈາກ ອາເມຣິກາ ແລະ ອິດສະຣາແອນ ຈະໂຈມຕີຢ່າງໜັກໜ່ວງ ໃສ່ ອີຣານແລ້ວ; ອິດສະຣາແອນ ທີ່ເຄີຍໂຈມຕີ ລີບັງ ຈາກຄວາມຂັດແຍ່ງກັບ ປາແລັດສະຕິນຢູ່ແລ້ວ ຍິ່ງໄດ້ໂອກາດ ໂຈມຕີໃສ່ກຸ່ມຮິດບອນເລາະ ໃນພາກໃຕ້ ຂອງລີບັງ ຮຸນແຮງກວ່າເກົ່າ; ສ່ວນ ອີຣານ ກໍໄດ້ໂຈມຕີບັນດາຖານທັບ ຂອງ ອາເມຣິກາ ຢູ່ບັນດາປະເທດຕາເວັນອອກກາງ ລວມທັງ ກູເວດ, ສະຫະນະຄອນ ເອເມຣັດ ອາຣັບ, ກາຕາ, ຕວັກກີ ແລະ ອື່ນໆ. ຈາກສະພາບຄວາມຂັດແຍ່ງດັ່ງກ່າວ ໄດ້ເຮັດໃຫ້ລາຄານ້ຳມັນດິບໃນຕະຫຼາດໂລກເພີ່ມຂຶ້ນຢ່າງຕໍ່ເນື່ອງ ຍ້ອນຊ່ອງແຄບ Hormuz ຖືກປິດ. ຜູ້ຊ່ຽວຊານ ເຕືອນວ່າ ຖ້າຫາກຊ່ອງແຄບຮໍມຸດ ຍັງສືບຕໍ່ຖືກປິດ, ລາຄານ້ຳມັນໃນອະນາຄົດອັນໃກ້ນີ້ ກໍອາດເພີ່ມສູງຂຶ້ນເຖິງ 150-200 ໂດລາສະຫະລັດຕໍ່ຖັງ (ເບເຣວ). ຂະນະທີ່, ຈີນ ໄດ້ຮຽກ ຮ້ອງໃຫ້ຢຸດຕິການສູ້ຮົບໂດຍທັນທີ ແລະ ອາດຈະຕ້ອງຊອກຫານ້ຳມັນຈາກແຫຼ່ງອື່ນມາທົດແທນ ຫາກສະຖານະການຍັງຄົງເຄັ່ງຕຶງຕໍ່ໄປ, ສ່ວນ ສ.ເກົາຫຼີ ເຕືອນເຖິງການລົງໂທດທີ່ເຂັ້ມງວດຕໍ່ໂຮງກັ່ນນ້ຳມັນ ແລະ ສະຖານີບໍລິການນ້ຳມັນທີ່ກັກຕຸນນ້ຳມັນ ຫຼື ສົມຮູ້ຄວາມຄິດໃນການກຳນົດລາຄາ.

ນອກຈາກນັ້ນ, ຫຼາຍປະເທດໃນພາພື້ນອາຊີ ໄດ້ເລີ່ມນຳໃຊ້ມາດຕະການສຸກເສີນດ້ານພະລັງງານ ພາຍຫຼັງທີ່ສະພາບວິກິດການຄວາມຂັດແຍ່ງຢູ່ຕາເວັນອອກກາງ ຍັງສືບຕໍ່ແກ່ຍາວ ແລະ ການຂົນສົ່ງນ້ຳມັນຜ່ານຊ່ອງແຄບຮໍມຸດຖືກຢຸດສະງັກ, ສົ່ງຜົນໃຫ້ລາຄາພະລັງງານ ໂດຍສະເພາະນ້ຳມັນ ເພີ່ມສູງຂຶ້ນຢ່າງຕໍ່ເນື່ອງ ແລະ ມີຄວາມສ່ຽງສູງຕໍ່ການຂາດເຂີນດ້ານພະລັງງານ, ເຮັດໃຫ້ບາງປະເທດ ໄດ້ເລີ່ມຈຳກັດການສົ່ງອອກນ້ຳມັນ ແລະ ຫຼຸດຜ່ອນການນຳໃຊ້ນ້ຳມັນຢູ່

ພາຍໃນປະເທດ ຊຶ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ກັບພາກອຸດສາຫະກໍາການຜະລິດ, ການຂົນສົ່ງ ແລະ ການບໍລິການອື່ນໆ ເຮັດໃຫ້ລາຄາສິນຄ້າປະເພດຕ່າງໆທີ່ກ່ຽວຂ້ອງ ເພີ່ມສູງຂຶ້ນເປັນລະບົບຕ່ອງໂສ້ຕາມໆກັນ ແລະ ສົ່ງຜົນກະທົບໂດຍກົງຕໍ່ຄ່າຄອງຊີບ ແລະ ການດໍາລົງຊີວິດຂອງປະຊາຊົນ. ຕໍ່ກັບສະພາບດັ່ງກ່າວ, ອົງການພະລັງງານສາກົນ (IEA) ໄດ້ປະກາດປ່ອຍນໍ້າມັນຈາກຄັງສໍາຮອງສຸກເສີນເປັນການຮີບດ່ວນ ເພື່ອຊ່ວຍສະໜອງ ແລະ ໃຫ້ ການຊ່ວຍເຫຼືອແກ່ບັນດາປະເທດຕ່າງໆໃນພາກພື້ນອາຊີ, ມາດຕະການດັ່ງກ່າວ ຖືເປັນສ່ວນໜຶ່ງໃນມາດຕະການສຸກເສີນຄັ້ງໃຫຍ່ທີ່ສຸດຂອງ IEA ເພື່ອຮັກສາສະຖຽນລະພາບຕະຫຼາດພະລັງງານໂລກ. ນັກວິເຄາະຈໍານວນໜຶ່ງ ເຫັນວ່າ: ວິກິດການທີ່ເກີດຂຶ້ນຈາກຄວາມຂັດແຍ່ງລະຫວ່າງ ອາເມຣິກາ-ອິດສະຣາແອນ ກັບ ອີຣານ ຄັ້ງນີ້ ສະທ້ອນໃຫ້ເຫັນເຖິງຄວາມໝັ້ນຄົງທາງດ້ານພະລັງງານ ຂອງບັນດາປະເທດໃນຂົງເຂດອາຊີ ທີ່ມີຄວາມອ່ອນໄຫວ ແລະ ເພິ່ງພາການນໍາເຂົ້ານໍ້າມັນຈາກຕາເວັນອອກກາງເປັນສ່ວນໃຫຍ່. ເຮັດໃຫ້ຫຼາຍປະເທດ ຕ້ອງໄດ້ທົບທວນຄືນເຖິງບັນດາມາດຕະການຕ່າງໆ ເພື່ອແກ້ໄຂ ແລະ ຮັບມືໃນຕໍ່ໜ້າ ເຊັ່ນ: ເພີ່ມການລົງທຶນໃນຂົງເຂດພະລັງງານໝູນວຽນ, ພະລັງງານທົດແທນ ແລະ ກະຈາຍແຫຼ່ງນໍາເຂົ້ານໍ້າມັນຈາກຫຼາຍແຫ່ງເພີ່ມຂຶ້ນໃນອະນາຄົດ ແລະ ອື່ນໆ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

**1) ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ສົ່ງສານອວຍພອນເຖິງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ**

ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ (22 ມີນາ 1955 - 22 ມີນາ 2026), ຄະນະບໍລິຫານງານພັກກອມມູນິດຫວຽດນາມ ໄດ້ສົ່ງສານອວຍພອນເຖິງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໂດຍມີເນື້ອໃນວ່າ:

ບົນເສັ້ນທາງປະຫວັດສາດຕະຫຼອດໄລຍະ 71 ປີ ຜ່ານມາ, ພາຍໃຕ້ການນໍາພາອັນສະຫຼາດສ່ອງໃສຂອງ ພັກປະຊາຊົນປະຕິວັດລາວ, ປະເທດຊາດລາວ ສາມາດຍາດໄດ້ຮັບຜົນສໍາເລັດອັນສໍາຄັນ, ຮອບດ້ານໃນບັນດາຂົງເຂດຕ່າງໆ; ຮັບປະກັນສະຖຽນລະພາບທາງດ້ານການເມືອງໄດ້ຢ່າງໝັ້ນທ່ຽງ, ການພັດທະນາເສດຖະກິດ-ສັງຄົມ ມີຜົນສໍາເລັດຢ່າງຕັ້ງໜ້າ, ຊີວິດການເປັນຢູ່ຂອງປະຊາຊົນ ນັບມື້ນັບມີການປັບປຸງດີຂຶ້ນເລື້ອຍໆ, ຖານະ, ບົດບາດຂອງລາວໄດ້ຮັບການຍົກສູງຢູ່ໃນພາກພື້ນ ແລະ ໃນເວທີສາກົນ. ຜົນສໍາເລັດອັນໃຫຍ່ຫຼວງ, ຮອບດ້ານຂອງ ພັກປະຊາຊົນປະຕິວັດລາວ ໄດ້ເປັນກໍາລັງໃຈປຸກລະດົມຊຸກຍູ້ອັນໃຫຍ່ຫຼວງ ໃຫ້ແກ່ ພັກ, ລັດ ແລະ ປະຊາຊົນຫວຽດນາມ.

ພັກ, ລັດ ແລະ ປະຊາຊົນຫວຽດນາມ ຍາມໃດກໍ່ເຄົາລົບ ແລະ ຈົດຈໍາບຸນຄຸນຕໍ່ການສະໜັບສະໜູນອັນບໍລິສຸດຜຸດຜ່ອງ ແລະ ລໍ້າຄ່າ ທີ່ ພັກ, ລັດ ແລະ ປະຊາຊົນລາວ ອ້າຍນ້ອງ ທີ່ມີຕໍ່ ຫວຽດນາມ ໃນພາລະກິດການປະຕິວັດ ໃນເມື່ອກ່ອນ ກໍ່ຄື ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃນປັດຈຸບັນ. ພວກຂ້າພະເຈົ້າ ຮູ້ສຶກປິຕິຍິນດີທີ່ ສອງພັກ, ສອງລັດ ໄດ້ເປັນເອກະພາບເພີ່ມເຕີມເນື້ອໃນ “ຫຸ້ນສ່ວນຍຸດທະສາດ” ເຂົ້າໃນກອບການພົວພັນ, ນໍາເອົາສາຍພົວພັນ ຫວຽດນາມ-ລາວ ພັດທະນາຂຶ້ນສູ່ລະດັບສູງໃໝ່ ພາຍໃຕ້ຄໍາຂວັນ “ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ”. ນີ້ເປັນບາດກ້າວການພັດທະນາທີ່ສໍາຄັນ, ສະແດງໃຫ້ເຫັນເຖິງຄວາມໄວ້ເນື້ອເຊື່ອໃຈທາງດ້ານການເມືອງຢ່າງເລິກເຊິ່ງ ແລະ ເປັນຄວາມຕັດສິນໃຈລວມ ໃນການເຮັດໃຫ້ການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຍິ່ງເລິກເຊິ່ງກວ່າເກົ່າ.

ພັກ, ລັດ ແລະ ປະຊາຊົນຫວຽດນາມ ສະໜັບສະໜູນຢ່າງແຂງແຮງ ແລະ ຮອບດ້ານຕໍ່ພາລະກິດການປ່ຽນແປງໃໝ່ຂອງລາວ ແລະ ຢືນຢັນວ່າ ຈະສືບຕໍ່ຄຽງບ່າ, ຄຽງໄລ່ ແລະ ສະໜັບສະໜູນສູງສຸດ ແກ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໃນການຜັນຂະຫຍາຍຢ່າງມີໄຊ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະ ແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X; ສ້າງສໍາເລັດ ສປປ ລາວ.

ພັກກອມມູນິດຫວຽດນາມ ໃຫ້ຄໍາໝັ້ນສັນຍາ ຈະສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນກັບ ພັກປະຊາຊົນປະຕິວັດລາວ ເພື່ອຈັດຕັ້ງຜັນຂະຫຍາຍບັນດາຖະແຫຼງການຮ່ວມ, ຂໍ້ຕົກລົງ, ສັນຍາທີ່ໄດ້ເຊັນກັນ ລະຫວ່າງ ສອງພັກ, ສອງລັດຖະບານ ໃນລະຫວ່າງ ການຢ້ຽມຢາມຂອງການນໍາຂັ້ນສູງຂອງສອງປະເທດ ໃນໄລຍະຜ່ານມາຢ່າງມີປະສິດທິຜົນ.

ອວຍພອນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບ ດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ຫວຽດນາມ-ລາວ ສວຍສົດງົດງາມ, ໝັ້ນຄົງທະນົງແກ່ນຕະຫຼອດກາລະນານ.

**2) ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່, ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕເກົາຫຼີ ໄດ້ສົ່ງ ໂທລະເລກອວຍພອນ ເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ**

ໃນໂອກາດວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ, ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕເກົາຫຼີ ໄດ້ສົ່ງ ໂທລະເລກອວຍພອນ ເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ, ເຊິ່ງມີເນື້ອໃນດັ່ງນີ້:

ເນື່ອງໃນໂອກາດວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນອັນປະເສີດ ແລະ ຄຳຊົມເຊີຍອັນອົບອຸ່ນຖານສະຫາຍ ມາຍັງ ສະຫາຍ ແລະ ຜ່ານ ສະຫາຍ ໄປຍັງ ຄະນະບໍລິຫານງານ ສູນກາງພັກປະຊາຊົນປະຕິວັດລາວ ແລະ ສະມາຊິກພັກ ທຸກຖ້ວນໜ້າ.

ການສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ເປັນເຫດການທາງປະຫວັດສາດທີ່ມີຄວາມໝາຍສຳຄັນຢ່າງຍິ່ງ ໃນການກຳນົດຊະຕາກຳຂອງປະຊາຊົນລາວ ແລະ ເປັນຈຸດປ່ຽນທີ່ສຳຄັນໃນການຕໍ່ສູ້ເພື່ອລົບລ້າງການປົກຄອງຂອງຕ່າງຊາດ ແລະ ສ້າງຕັ້ງລະບອບປະຊາທິປະໄຕປະຊາຊົນ.

ຂ້າພະເຈົ້າ ສະແດງຄວາມຫວັງວ່າ ພາຍໃຕ້ການນຳພາ-ຊີ້ນຳຂອງ ພັກປະຊາຊົນປະຕິວັດລາວ ໂດຍມີ ສະຫາຍເປັນແກນນຳ, ປະຊາຊົນລາວ ຈະຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢ່າງມີໄຊ ແລະ ສາມາດບັນລຸເປົ້າໝາຍໃນການສ້າງສາປະເທດສັງຄົມນິຍົມ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງພັກ ແລະ ສອງປະເທດຂອງພວກເຮົາ ຈະສືບຕໍ່ໄດ້ຮັບການເສີມຂະຫຍາຍໃຫ້ຍິ່ງໆຂຶ້ນກວ່າເກົ່າ ຕາມຈິດໃຈທີ່ໄດ້ຕົກລົງກັນ ໃນການພົບປະຂອງພວກເຮົາ ໃນເດືອນຕຸລາ ປີຜ່ານມາ ທີ່ນະຄອນຫຼວງພຽງຢາງ.

ຂໍອວຍພອນໃຫ້ ສະຫາຍ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ປະສົບຜົນສຳເລັດອັນໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ວຽກງານອັນມີກຽດຂອງ ສະຫາຍ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າມາອວຍພອນຂອງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ, ສປ ຈີນ, ສປປ ເກົາຫຼີ ແລະ ສ.ກູບາ ປະຈຳ ສປປ ລາວ ໃນໂອກາດ ວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 71 ປີ**



ວັນທີ 20 ມີນາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ຕ້ອນຮັບ ສະຫາຍ ຫງວຽນ ມິງ ເຕິມ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານສະຖານ ທູດ ເຂົ້າອວຍພອນ ເນື່ອງໃນໂອກາດວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ (22 ມີນາ 1955 - 22 ມີນາ 2026). ໃນໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຂອບໃຈ ແລະ ປິຕິຊົມຊື່ນ ທີ່ໄດ້ຕ້ອນຮັບ ສະຫາຍ ຫງວຽນ ມິງ ເຕິມ ພ້ອມດ້ວຍຄະນະ ໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສາມັກຄີອັນສະໜິດສະໜົມ, ຄຳອວຍພອນໄຊອັນປະເສີດ ຖານສະຫາຍອ້າຍນ້ອງ ຫວຽດນາມ-ລາວ ມາສູ່ ຄະນະພັກ, ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ໄດ້ທົບທວນຄືນມູນເຊື້ອ ແຫ່ງການສ້າງຕັ້ງພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ມີຕົ້ນກຳເນີດມາຈາກ ພັກກອມມູນິດອິນດູຈີນ; ຕະຫຼອດໄລຍະ 71 ປີຜ່ານມາ, ພັກປະຊາຊົນປະຕິວັດລາວ ໄດ້ກາຍເປັນຄັນທຸງນຳພາການປະຕິວັດລາວ ຕໍ່ສູ້ຍາດເອົາເອກະລາດ ແລະ ສືບຕໍ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຈົນເຖິງປັດຈຸບັນ. ສອງຝ່າຍ ຕ່າງກໍຕີລາຄາສູງຕໍ່ ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ທີ່ສືບຕໍ່ໄດ້ຮັບການເພີ່ມທະວີ ແລະ ກ້າວເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ, ການນຳຂັ້ນສູງຂອງ ສອງພັກ, ສອງລັດ ແລະ ຂັ້ນຕ່າງໆ ນັບແຕ່ສູນກາງຈົນເຖິງທ້ອງຖິ່ນ ມີການແລກປ່ຽນຢ້ຽມຢາມເຊິ່ງກັນຢ່າງເປັນປົກກະຕິ, ແລກປ່ຽນບົດຮຽນທາງດ້ານທິດສະດີການເມືອງ, ບົດຮຽນໃນການປົກຄອງ, ພັດທະນາເສດຖະກິດ, ການຄ້າ, ການລົງທຶນ ແລະ ອື່ນໆ; ຕີລາຄາສູງຕໍ່ການປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖານທູດ ໃນການເປັນຂົວເຊື່ອມມິດຕະພາບ ແລະ ການພົວພັນຮ່ວມມືຂອງສອງຊາດ ລາວ-ຫວຽດນາມ, ປະກອບສ່ວນເຂົ້າໃນການເພີ່ມທະວີ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.



ໃນຕອນບ່າຍຂອງວັນດຽວກັນ, ສະຫາຍ ບຸນເຫຼືອ ພັນດານຸວົງ ຍັງໄດ້ຕ້ອນຮັບ ສະຫາຍ ນາງ ຟາງ ຫົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ເຂົ້າອວຍພອນເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ, ເຊິ່ງ ສະຫາຍທູດຈີນ ໄດ້ຊົມເຊີຍຕໍ່ຜົນສຳເລັດທີ່ພັກ, ລັດ ແລະ ປະຊາຊົນລາວ ຍາດມາໄດ້ ພາຍໃຕ້ການນຳພາຊີ້ນຳ ຂອງ ພັກປະຊາຊົນປະຕິວັດລາວ ໃນ

ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນຕະຫຼອດໄລຍະ 70 ປີກວ່າຜ່ານມາ; ຕີລາຄາສູງ ຜົນສຳເລັດໃນການດຳເນີນພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ ມີຫຼັກການ ຂອງ ພັກປະຊາຊົນປະຕິວັດລາວ ແລະ ການພົວພັນຮ່ວມມື ລະຫວ່າງ ສອງພັກ ລາວ-ຈີນ ໃນໄລຍະມໍ່ໆມານີ້ ແລະ ຢືນຢັນວ່າ ສະຖານທູດຈີນ ຈະສືບຕໍ່ປະສານສົມທົບ ແລະ ຮ່ວມມືກັບ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ໃນການຊຸກຍູ້ເສີມຂະຫຍາຍການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຈີນ-ລາວ. ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຂອບໃຈ ຕໍ່ຄຳອວຍພອນ ຂອງສະຫາຍທູດ, ຕີລາຄາສູງ ຕໍ່ການປະກອບສ່ວນຂອງ ສະຖານທູດຈີນ ໃນການຊຸກຍູ້ການພົວພັນຮ່ວມມື ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ, ຕາງໜ້າສູນກາງພັກປະຊາຊົນປະຕິວັດລາວ ສະແດງຄວາມຂອບໃຈ ພັກ, ລັດ ແລະ ປະຊາຊົນຈີນອ້າຍນ້ອງ ທີ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ພັກ, ລັດຖະບານລາວ ຕະຫຼອດໄລຍະຜ່ານມາ, ເຊິ່ງໄດ້ປະກອບສ່ວນຢ່າງໃຫຍ່ຫຼວງ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ສປປ ລາວ. ໃນການພົບປະ, ສອງຝ່າຍ ຍັງໄດ້ແລກປ່ຽນຄຳຄິດເຫັນນຳກັນ ກ່ຽວກັບການຮ່ວມກັນເປັນເສນາທິການໃຫ້ແກ່ ສອງສູນກາງພັກ ລາວ-ຈີນ ໃນການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ແລະ ບັນດາແຜນການຮ່ວມມື ລະຫວ່າງ ສອງພັກ ປະຈຳປີ 2026.



ວັນທີ 17 ມີນາ 2026, ສະຫາຍ ບຸນເຫຼືອ ພັນດານຸວົງ ກໍໄດ້ຕ້ອນຮັບ ສະຫາຍ ລີ ຢົງ ຊົນ, ເອກອັກຄະລັດ ຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ເຂົ້າຢ້ຽມຂ່ຳນັບ ແລະ ມອບໂທລະເລກອວຍ ພອນພ້ອມດ້ວຍກະຕ່າດອກໄມ້ ຂອງ ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ ພັກແຮງງານເກົາຫຼີ ສົ່ງເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ເນື່ອງໃນໂອກາດ ວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ. ສອງຝ່າຍ ຍັງໄດ້ສະແດງຄວາມຊົມເຊີຍຜົນສຳເລັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງ ພັກປະຊາຊົນປະຕິວັດລາວ ແລະ ຄັ້ງທີ IX ຂອງ ພັກແຮງງານເກົາຫຼີ ໃນບໍ່ດົນຜ່ານມາ, ຕີລາຄາສູງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ທີ່ມີມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ສປປ ລາວ-ສປປ ເກົາຫຼີ ຕະຫຼອດໄລຍະຜ່ານມາ, ຍິນດີສືບຕໍ່ປະສານສົມທົບກັນຢ່າງໃກ້ຊິດ ເພື່ອປະກອບສ່ວນເຂົ້າໃນການເພີ່ມທະວີຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ, ປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ, ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.



ນອກນັ້ນ ວັນທີ 26 ມີນາ 2026, ສະຫາຍ ບຸນເຫຼືອ ພັນດານຸວົງ, ກໍໄດ້ຕ້ອນຮັບ ສະຫາຍ ນ. ເອັກນາ ເວຍ ວາລເດດສ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສ.ກູບາ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານສະຖານທູດ ເຂົ້າອວຍພອນ ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 71 ປີ.

**2) ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊຸມທາງໄກກັບ ປະທານພັກເບລາຢາຣຸດສ໌**




ໂດຍປະຕິບັດຕາມການມອບໝາຍ ຈາກ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ວັນທີ 18 ມີນາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ຫົວໜ້າ ຄຕພ ໄດ້ພົບປະຜ່ານກອງປະຊຸມວີດີໂອທາງໄກກັບ ທ່ານ ນາງ ໂອນກາ ເຈໂມດານນົບວາ (Olga Chemdanova), ປະທານພັກເບລາຢາຣຸດສ໌ ໂດຍມີ ທ່ານ ອູລັດຊີມີຣ ບາຣາວົກູ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ເບລາຣຸດຊີ ປະຈຳ ສປປ ລາວ ທີ່ມີສຳນັກງານຕັ້ງຢູ່ ນະຄອນຫຼວງຮ່າໂນ້ຍ, ສສ.ຫວຽດນາມ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຂອງທັງສອງຝ່າຍ ເຂົ້າຮ່ວມ. ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີ ແລະ ເປັນກຽດຢ່າງສູງ ທີ່ໄດ້ພົບປະກັບ ທ່ານ ນາງ ໂອນກາ ເຈໂມດານນົບວາ, ປະທານພັກເບລາຢາຣຸດສ໌ ເຊິ່ງເປັນຄັ້ງທຳອິດທີ່ ສອງພັກ ໄດ້ຈັດການພົບປະຜ່ານກອງປະຊຸມທາງໄກຮ່ວມກັນ ເພື່ອປຶກສາຫາລືກ່ຽວກັບ ການເສີມຂະຫຍາຍການພົວພັນຮ່ວມມືດ້ານພັກ, ທິດທາງແຜນການຮ່ວມມືໃນຕໍ່ໜ້າ ແລະ ບາງບັນຫາທີ່ສອງຝ່າຍ ມີຄວາມສົນໃຈຮ່ວມກັນ. ພ້ອມດຽວກັນນັ້ນ, ທ່ານ ບຸນເຫຼືອ ພັນດານຸວົງ ກໍໄດ້ສະແດງຄວາມຂອບໃຈ ພັກເບລາຢາຣຸດສ໌ ທີ່ໄດ້ສົ່ງສານຊົມເຊີຍ ໃນໂອກາດວັນສ້າງຕັ້ງ ພັກ ປປ ລາວ ຄົບຮອບ 71 ປີ ໃນປີ 2026 ແລະ ໃນໂອກາດການດຳເນີນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃນຕົ້ນປີ 2026. ພ້ອມນີ້, ຍັງໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ ບົດບາດການນຳພາ ແລະ ການເຄື່ອນໄຫວອັນພົ້ນເດັ່ນທາງດ້ານການເມືອງຂອງ ພັກເບລາຢາຣຸດສ໌ ຢູ່ພາຍໃນ ເບລາຣຸດຊີ ຕະຫຼອດໄລຍະ 3 ປີຜ່ານມາ ແລະ ຜົນສຳເລັດຂອງການດຳເນີນກອງປະຊຸມສະພາແຫ່ງຊາດ ທົ່ວເບລາຣຸດຊີ ໃນເດືອນ ທັນວາ 2025 ທີ່ຜ່ານມາ ແລະ ໄດ້ແຈ້ງໃຫ້ ປະທານພັກເບລາຢາຣຸດສ໌ ຊາບກ່ຽວກັບ ພັກ ປປ ລາວ ໂດຍສັງເຂບ, ແນວທາງການຕ່າງປະເທດ, ສະພາບພົ້ນເດັ່ນທາງດ້ານການເມືອງ-ເສດຖະກິດ ຂອງ ສປປ ລາວ, ວຽກງານການທູດປະຊາຊົນ ກໍຄື ສະມາຄົມມິດຕະພາບຂອງສອງປະ ເທດ ແລະ ວຽກງານຊາວໜຸ່ມ. ໃນໂອກາດດັ່ງກ່າວນີ້, ຫົວໜ້າ ຄຕພ ຍັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ການຊ່ວຍເຫຼືອອັນລ້ຳຄ່າຂອງ ລັດຖະບານ ແລະ ປະຊາຊົນ ເບລາຣຸດຊີ ທີ່ມີຕໍ່ ປະຊາຊົນລາວ ຕະຫຼອດໄລຍະຜ່ານມາ ໂດຍສະເພາະດ້ານການສຶກສາ ກໍຄື ການສະໜັບສະໜູນ-ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວທີສາກົນ.

**3) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາເຜີຍແຜ່ ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ວັນເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 80 ປີ ແລະ ວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 71 ປີ**




ວັນທີ 20 ມີນາ 2026, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດປາຖະກະຖາເຜີຍແຜ່, ເຊື່ອມຊຶມ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ. ໂດຍໃຫ້ກຽດເປັນປະທານ ແລະ ເຜີຍແຜ່ ຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະບໍລິຫານງານພັກ ແລະ ພະນັກງານ ທົ່ວ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ເຜີຍແຜ່ ແລະ ຍົກໃຫ້ເຫັນເນື້ອໃນສຳຄັນບາງຕອນຂອງ ມະຕິ ຄື: ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາໂຄງການການເມືອງ ຂອງພັກ ສະບັບທີ 3 ຊຶ່ງເປັນເອກະສານສຳຄັນ ທີ່ຊີ້ທາງເດີນໃຫ້ພັກ ແລະ ປວງຊົນລາວບັນດາເຜົ່າ ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ຊຶ່ງເປັນລະບອບການເມືອງ ທີ່ໄດ້ມາຈາກປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນນັ້ນ ໃຫ້ໜັກແໜ້ນເຂັ້ມແຂງຍິ່ງໆຂຶ້ນ. ໂຄງການການເມືອງ ສະບັບທີ 3 ໄດ້ວາງ 11 ແຜນນະໂຍບາຍໃຫຍ່ ຂອງການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ຄື: ພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມໃຫ້ເປັນລະບົບ, ທັນສະໄໝ, ພັກເຮົາ ສືບຕໍ່ຢຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ບັນດາຫຼັກການ ແລະ ທັດສະນະພື້ນຖານ ໃນການຍູ້ແຮງການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຂອງພັກເຮົາ ຄື: 1. ການປ່ຽນແປງໃໝ່, ການສະແຫວງຫາສັດຈະທຳ ໃນການນຳພາຂອງພັກ ແມ່ນພາລະກິດປະຕິວັດອັນເລິກເຊິ່ງເຖິງຖອງ ຕ້ອງດຳເນີນການຢ່າງຮອບດ້ານ ແລະ ສະໜ່ຳສະເໝີ. ພວກເຮົາ ຕ້ອງຢຶດໝັ້ນຫຼັກການຂອງພັກ, ທັງຕ້ອງປະດິດສ້າງ, ຕໍ່ຍອດໃຫ້ສູງຂຶ້ນ ແລະ ຫັນເຂົ້າສູ່ລວງເລິກກວ່າເກົ່າ, ຕັດສິນໃຈປະຕິບັດຢ່າງເດັດດ່ຽວໜຽວແໜ້ນ, 2. ເຊີດຊູນ້ຳໃຈຮັກຊາດອັນດູດດື່ມ, ມີສະຕິຊາດເອກະພາບອັນສູງສົ່ງ ແລະ ຮັກລະບອບໃໝ່ຢ່າງສຸດຊຶ້ງ, 3. ຕ້ອງຖືສຳຄັນການພັດທະນາຊັບພະຍາກອນມະນຸດ, ພູມປັນຍາ ຂອງຄົນໃນຊາດ, ຮັບປະກັນ ຄວາມສົມສ່ວນ ລະຫວ່າງ ການພັດທະນາເສດຖະກິດ ກັບ ການພັດທະນາວັດທະນະທຳ-ສັງຄົມ ແລະ ປົກປັກຮັກສາສິ່ງແວດ ລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ແລະ ລະຫວ່າງ ການພັດທະນາເສດຖະກິດ ກັບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, 4. ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດປະຊາທິປະ ໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ ທີ່ສັກສິດ ແລະ ສະເໝີພາບ ພາຍໃຕ້ການນຳພາຂອງພັກ, 5. ເພີ່ມຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບ ຂອງຄະນະພັກແຕ່ລະຂັ້ນ ໃນທຸກຂົງເຂດວຽກງານ, ສືບຕໍ່ສ້າງຮາກຖານພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນກຳລັງແຮງໃຫ້ແກ່ການຂັບເຄື່ອນການນຳພາ-ຊີ້ນຳ ຂອງຄະນະພັກ ໃນລະບົບການເມືອງຢູ່ແຕ່ລະຂັ້ນ, 6. ເພີ່ມທະວີການນຳພາເດັດຂາດ, ໂດຍກົງ, ຮອບດ້ານຂອງພັກ ຕໍ່ກຳລັງປະກອບອາວຸດປະຕິວັດ, ການປະຕິບັດແນວທາງ, ນະໂຍບາຍການຕ່າງປະເທດທີ່ຄ່ອງແຄ້ວ, ມີໄຫວພິບ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດ, ສ້າງເງື່ອນໄຂສະພາບແວດລ້ອມທີ່ສະດວກ ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ. ບົນພື້ນຖານການຕີລາຄາການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງ ພັກ, ໄດ້ສະຫຼຸບຖອດຖອນບົດຮຽນ ແລະ ສືບຕໍ່ວາງຈຸດໝາຍ ເພື່ອນຳພາພາລະກິດປະຕິວັດ ຮອດປີ 2055, ໃນນັ້ນ ໄດ້ວາງຍຸດທະສາດພັດທະນາ ໄລຍະ 10 ປີ (2026-2035) ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໃຫ້ມີພື້ນຖານອັນໜັກແໜ້ນ ສຳລັບບາດກ້າວເດີນຕໍ່ໄປຂອງປະເທດຊາດ ແລະ ວຽກງານອື່ນໆ.

ໃນໂອກາດດັ່ງກ່າວ, ສະຫາຍ ຍັງໄດ້ທວນຄືນມູນເຊື້ອອັນເສຍອິງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດຄົບຮອບ 80 ປີ ໂດຍໄດ້ຍົກໃຫ້ເຫັນເຖິງ ຄວາມໝາຍ, ຄວາມສຳຄັນຂອງປັ້ນຮົບປ້ອງກັນຕົວເມືອງທ່າແຂກ, ເຊິ່ງນອກຈາກແມ່ນໜຶ່ງໃນບັ້ນຮົບທີ່ປະຊາຊົນລາວຕໍ່ສູ້ຕ້ານພວກລ່າເມືອງຂຶ້ນແບບເກົ່າຝຣັ່ງຮຸກຮານ ຫາກຍັງເປັນວັນສາມັກຄີຕໍ່ສູ້ດ້ວຍເລືອດເນື້ອເປັນຕາຍນຳກັນ ລະຫວ່າງ ສອງຊາດລາວ-ຫວຽດນາມ ອ້າຍນ້ອງ ທີ່ເປັນແວ່ນແຍງອັນໃສແຈ້ງຂອງນ້ຳໃຈສູ້ຮົບພິລະອາດຫານ ແລະ ບໍ່ຍອມຈຳນົນຂອງ ກອງທັບ ແລະ ປະຊາຊົນຊາວເມືອງທ່າແຂກ ກໍ່ຄື ການບັນຊາທີ່ເດັດດ່ຽວໜຽວແໜ້ນຂອງ ຄະນະກອງບັນຊາການກຳລັງປະກອບອາວຸດ ໂດຍແມ່ນ ປະທານ ສຸພານຸວົງ ເປັນຜູ້ນຳໜ້າ, ເຊິ່ງມັນໄດ້ຝັງເລິກໃນດວງໃຈຂອງປະຊາຊົນລາວ ແລະ ຫວຽດນາມ ທີ່ຮັກຊາດຈົນເຖິງທຸກມື້ນີ້. ພ້ອມດຽວກັນນັ້ນ, ສະຫາຍ ຍັງຍົກໃຫ້ເຫັນເຖິງຂະບວນວິວັດແຫ່ງການກຳເນີດຂອງ ພັກປະຊາຊົນປະຕິວັດລາວ ແລະ ຍົກໃຫ້ເຫັນເຖິງຜົນງານອັນພົ້ນເດັ່ນຂອງພັກ ຕະຫຼອດໄລຍະ 71 ປີ ແຫ່ງການນຳພາໃນແຕ່ລະໄລຍະ ນັບແຕ່ການຕໍ່ສູ້ປົດປ່ອຍປະເທດຊາດ, ການນຳພາປົກປັກຮັກສາລະບອບໃໝ່ ແລະ ການສ້າງພື້ນຖານເສດຖະກິດ-ສັງຄົມ ຈົນເຖິງປັດຈຸບັນ, ປະເທດຊາດໄດ້ຮັບການພັດທະນາ ແລະ ມີຜົນສຳເລັດຢ່າງໃຫຍ່ຫຼວງ, ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ.

**4) ຄະນະພົວພັນຕ່າງປະເທດສູນກາງພັກ, ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານກວດກາ ແລະ ພິທີ ມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2025**



ທີ 20 ມີນາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີ ມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ກຽດເປັນປະທານໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາຄະນະບໍລິຫານງານພັກ, ສະມາຊິກພັກທັງໝົດ ພາຍໃນ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ 62 ສະຫາຍ, ຍິງ 19 ສະຫາຍ.

ຄະນະພົວພັນຕ່າງປະເທດສູນກາງພັກ ມີທັງໝົດ 6 ໜ່ວຍພັກ, ໃນພິທີ ໄດ້ຜ່ານບົດສະຫຼຸບຜົນການກວດກາພັກ-ລັດປົກກະຕິ ແລະ ແຜນການຮັກສາມາມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2025, ຫຼັງຈາກນັ້ນ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງເລຂາຄະນະພັກ, ປະທານກວດກາພັກ, ຮອງຫົວໜ້າ ຄຕພ ໄດ້ໃຫ້ກຽດຜ່ານມະຕິຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2025;

ໃນພິທີດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ກຽດມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2025 ໃຫ້ແກ່ 5 ໜ່ວຍພັກ ພ້ອມທັງໃຫ້ກຽດໂອ້ລົມຕໍ່ທີ່ປະຊຸມ ໂດຍສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງ 05 ໜ່ວຍພັກ ທີ່ໄດ້ມີຄວາມພະຍາມ ແລະ ເຊີດຊູຄວາມຮັບຜິດຊອບສູງ ໃນການຮັກສາມາມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2025 ແລະ ເຊື່ອໝັ້ນວ່າ ບັນດາໜ່ວຍພັກດັ່ງກ່າວ ຈະສືບຕໍ່ນຳພາໜ່ວຍພັກຂອງຕົນໃຫ້ຮັກສາມາມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນປີຕໍ່ໄປ, ສຳລັບໜ່ວຍພັກ ທີ່ເປັນໜ່ວຍພັກແຂງໃນປີນີ້ ກໍ່ສາມາດບຸກບືນເພື່ອສ້າງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນປີ 2026, ໂດຍພາຍໃຕ້ການນຳພາ-ຊີ້ນຳ ຂອງສະຫາຍເລຂາໜ່ວຍພັກ ແລະ ການເຄື່ອນໄຫວຢ່າງຫ້າວຫັນດ້ວຍຄວາມຮັບຜິດຊອບສູງ ຂອງສະມາຊິກພາຍໃນໜ່ວຍ ຈຶ່ງສືບຕໍ່ບົດບາດເປັນແບບຢ່າງນຳໜ້າພາທາງ, ມີສະຕິຕໍ່ການຈັດຕັ້ງຢືນຢູ່ແຖວໜ້າຂອງທຸກຂະບວນການ, ເພື່ອຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກຄັ້ງທີ III ແລະ ພ້ອມກັນປະຕິບັດຕາມມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢ່າງເຂັ້ມງວດ.

**5) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີປະກາດພະນັກງານ ອອກພັກການ-ຮັບອຸດໜູນບຳນາ**




ວັນທີ 26 ມີນາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປະກາດພະນັກງານຂັ້ນສູນກາງຄຸ້ມຄອງອອກພັກການ-ຮັບອຸດໜູນບຳນານ ໂດຍການໃຫ້ກຽດເປັນປະທານ ຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນ ຕ່າງປະເທດສູນກາງພັກ, ມີຄະນະພັກ-ຄະນະນຳ, ຄະນະກົມ ຕະຫຼອດຮອດພະນັກງານທົ່ວ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີດັ່ງກ່າວ, ສະຫາຍ ເກີລໍ່ ຢ່າງກໍ່, ຫົວໜ້າກົມຈັດຕັ້ງ-ພະນັກງານ ໄດ້ຜ່ານມະຕິຕົກລົງ ຂອງ ຄະນະເລຂາທິການສູນກາງພັກ ສະບັບເລກທີ 1095/ຄລສພ, ລົງວັນທີ 29 ທັນວາ 2025 ວ່າດ້ວຍການອະນຸມັດໃຫ້ສະຫາຍ ຄຳພັນ ອົ່ນລາວັນ, ຫົວໜ້າຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ລາວ ປະຈຳ ຣາຊະອານາຈັກໄທ ອອກພັກການ-ຮັບອຸດໜູນບຳນານ ຕາມກົດໝາຍ ວ່າດ້ວຍ ພະນັກງານ-

ລັດຖະກອນ ເຊິ່ງ ສະຫາຍ ຄຳພັນ ອັ່ນລາວັນ ແມ່ນພະນັກງານຫຼັກແຫຼ່ງຜູ້ໜຶ່ງທີ່ມີຄຸນງາມຄວາມດີ ແລະ ປະກອບສ່ວນສ້າງຜົນງານຢ່າງຫຼວງຫຼາຍ ຕໍ່ຂະແໜງການຕ່າງປະເທດໃນໄລຍະຜ່ານມາ ເປັນຕົ້ນ ໄດ້ຮັບການແຕ່ງຕັ້ງເປັນພະນັກງານນໍາພາ-ຄຸ້ມຄອງຂັ້ນຕ່າງໆ. ນອກນັ້ນ, ກ່ອນໜ້ານີ້ ສະຫາຍ ຍັງໄດ້ຖືກແຕ່ງຕັ້ງເປັນເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສປປ ລາວ ປະຈໍາ ມາເລເຊຍ ແລະ ປະຈໍາ ສ. ອາເມຣິກາ.

ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ມີຄໍາເຫັນຕໍ່ ສະຫາຍ ຄໍາພັນ ອັ່ນລາວັນ ແລະ ບັນດາຜູ້ເຂົ້າຮ່ວມພິທີວ່າ: ການອອກພັກຜ່ອນຮັບອຸດໜູນ-ບໍານານ ໝາຍເຖິງການເຮັດສໍາເລັດໜ້າທີ່ການເມືອງ ຢ່າງສຸດກົກສຸດປາຍ ເຊິ່ງຖືເປັນກຽດອັນສູງສົ່ງຂອງ ສະຫາຍ ທີ່ໄດ້ປະກອບສ່ວນປະຕິບັດໜ້າທີ່ຕະຫຼອດໄລຍະ 39 ປີ ຜ່ານມາ, ທັງເປັນແບບຢ່າງທີ່ພະນັກງານ ຄຕພ ຄວນນໍາໄປສຶກສາຮຽນຮູ້. ຕໍ່ຜົນງານດັ່ງກ່າວ, ການຈັດຕັ້ງຈຶ່ງໄດ້ປະຕິບັດນະໂຍບາຍໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ຕໍ່ຜູ້ກ່ຽວ ເຊິ່ງເປັນກົດເກນທີ່ພະນັກງານທຸກຂັ້ນຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ພາຍຫຼັງເຮັດສໍາເລັດການປະຕິບັດໜ້າທີ່ການເມືອງ.

## IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ

### 1) ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ຄະນະຜູ້ແທນກອງທຶນຈີນເພື່ອສັນຕິພາບ ແລະ ການພັດທະນາ



ໂດຍຕອບສະໜອງຕາມຄໍາເຊີນ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ, ຄະນະຜູ້ແທນກອງທຶນຈີນເພື່ອ ສັນຕິພາບ ແລະ ການພັດທະນາ ນໍາໂດຍ ສະຫາຍ ຫວາງ ເຫີໝິງ, ເລຂາທິການກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ແຕ່ວັນທີ 24-26 ມີນາ 2026.

ວັນທີ 24 ມີນາ 2026 ຄະນະຜູ້ແທນ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ສົມມາດ ພົລເສນາ, ປະທານ ຄະນະ ສັນຕິພາບ ແລະ ສາມັກຄີ ຂອງລາວ. ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມຕ້ອນຮັບຢ່າງ ອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກ ຂອງຄະນະຜູ້ແທນ ກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ ຖືເປັນການປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືແບບຄູ່ຮ່ວມຍຸດທະສາດ, ຮອບດ້ານ, ໝັ້ນຄົງຍາວນານ ຕາມທິດສີ່ດີ ແລະ ຄູ່ຮ່ວມຊາຕາກໍາ ລາວ-ຈີນ. ສອງຝ່າຍຍັງໄດ້ ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງ ສອງອົງການຈັດຕັ້ງສັນຕິພາບ ໃນການປະກອບສ່ວນເຂົ້າໃນການສ້າງສາ ພັດທະນາ ສປປ ລາວ ເປັນຕົ້ນແມ່ນການພັດທະນາພື້ນຖານໂຄງລ່າງການສຶກສາ, ສາທາລະນະສຸກ ແລະ ມະນຸດສະທໍາ. ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ ໄດ້ພົວພັນຮ່ວມມື ແລະ ໄປມາຫາສູ່ກັນຢ່າງເປັນປົກກະຕິ ນັບແຕ່ປີ 2012 ເປັນຕົ້ນມາ. ໄລຍະຜ່ານມາ ໄດ້ຮ່ວມກັນສ້າງ ໂຮງຮຽນປະຖົມ ແລະ ມັດທະຍົມແລ້ວຈໍານວນ 25 ຫຼັງ, ຊ່ວຍເຫຼືອອຸປະກອນການຮຽນ ການສອນ, ອຸປະກອນການແພດໄລຍະການລະບາດ ຂອງພະຍາດໂຄວິດ 19. ຄະນະຜູ້ແທນ ກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ ຍັງໄດ້ ພົບປະເຮັດວຽກກັບພາກສ່ວນກ່ຽວຂ້ອງ ຂອງ ລາວ ໃນການແລກປ່ຽນ ຂໍ້ມູນກ່ຽວກັບອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (**INGOs**) ແລະ ອົງການຈັດຕັ້ງທາງສັງຄົມ ຂອງລາວ (**CSOs**). ນອກນັ້ນ, ຍັງໄດ້ເຂົ້າຮ່ວມພິທີ ມອບ-ຮັບ ອາຄານໂຮງຮຽນປະຖົມບ້ານໂພນຈະເລີນ, ເມືອງທ່າໂທມ, ແຂວງໄຊສົມບູນ, ເຊິ່ງເປັນ 1 ໃນ 5 ໂຄງການ ທີ່ປະຕິບັດຢູ່ 3 ແຂວງ (ໄຊສົມບູນ, ຫຼວງພະບາງ ແລະ ບໍ່ແກ້ວ) ໃນສົກປີ 2024-2025 ພາຍໃຕ້ການພົວພັນຮ່ວມມືລະຫວ່າງ ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ.

**2) ສະມາຄົມມິດຕະພາບ ລາວ-ມຽນມາ ເດີນທາງໄປຢ້ຽມຢາມ ເຮັດວຽກຢູ່ນະຄອນຫຼວງເນປີດໍ, ສສ. ມຽນມາ**



ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ມຽນມາ ນໍາໂດຍ ທ່ານ ຈັນທະວົງ ແສນອາມາດມົນຕີ, ຮອງປະທານກໍາມາທິການ ການຕ່າງປະເທດ, ສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ມຽນມາ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກຢູ່ນະຄອນຫຼວງເນປີດໍ, ສສ.ມຽນມາ ລະຫວ່າງ ວັນທີ 25 ກຸມພາ - 01 ມີນາ 2026.

ວັນທີ 27 ກຸມພາ 2026, ສອງສະມາຄົມມິດຕະພາບໄດ້ ຈັດກອງປະຊຸມພົບປະສອງຝ່າຍ ທີ່ ນະຄອນຫຼວງເນປີດໍ, ສ ສ.ມຽນມາ ໂດຍການເປັນປະທານຮ່ວມ ຂອງ ທ່ານ ຈັນທະວົງ ແສນອາມາດມົນຕີ, ປະທານສະມາຄົມມິດຕະພາບ ລາວ-ມຽນມາ ແລະ ທ່ານ ພົນຈັດຕະວາ ວິນ ມອງ (Win Maung), ປະທານສະມາຄົມມິດຕະພາບ ມຽນມາ-ລາວ ພ້ອມດ້ວຍບັນດາຄະນະສະມາຄົມມິດຕະພາບ ລາວ-ມຽນມາ ແລະ ມຽນມາ-ລາວ, ພະນັກງານຈາກພາກສ່ວນທີ່ ກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ສະຫຼຸບຕີລາຄາຜົນການພົວພັນຮ່ວມມືໃນໄລຍະປີ 2025 ຜ່ານມາ ແລະ ວາງທິດທາງແຜນການຕໍ່ ໜ້າປະຈໍາປີ 2026 ຂອງສອງສະມາຄົມ ເພື່ອເຄື່ອນໄຫວຮ່ວມກັນຕາມພາລະບົດບາດ ແລະ ເຜີຍແຜ່ໃຫ້ປະຊາຊົນສອງ ຊາດ ລາວ-ມຽນມາ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ, ສະໜັບສະໜູນໃຫ້ມີການໄປມາຫາສູ່, ພົວພັນຮ່ວມມື, ສ້າງ ຄວາມຮັກແພງ, ຄວາມໄວ້ເນື້ອເຊື່ອໃຈ ແລະ ສ້າງກິດຈະກໍາຮ່ວມກັນ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ສສ.ມຽນມາ ໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວເຂົ້າສູ່ລະດັບໃໝ່. ໃນໂອກາດຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມຄັ້ງນີ້, ສະມາຄົມມິດຕະພາບ ລາວ-ມຽນມາ ແລະ ມຽນມາ-ລາວ ໄດ້ຮ່ວມກັນເຊັນບົດບັນທຶກຄວາມເຂົ້າໃຈ (MOU) ໃນ ການພົວພັນມິດຕະພາບ ແລະ ການຮ່ວມມື ໄລຍະ 05 ປີ (ແຕ່ປີ 2026-2030) ເພື່ອເປັນບ່ອນອີງໃນການຈັດຕັ້ງປະ ຕິບັດການພົວພັນຮ່ວມມື 2 ຝ່າຍໃນຕໍ່ໜ້າ.

## V. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ພາຍໃນ ຄຕພ

**ສະຫະພັນແມ່ຍິງຄະນະພົວພັນຕ່າງປະເທດສູນກາງພັກ ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈໍາປີ 2025 ແລະ ວາງແຜນທິດທາງປີ 2026 ແລະ ສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 116 ປີ**



ວັນທີ 13 ມີນາ 2026, ສະຫະພັນແມ່ຍິງຄະນະພົວພັນ ຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບ ການເຄື່ອນໄຫວວຽກງານປະຈໍາປີ 2025 ແລະ ວາງແຜນ ທິດທາງປີ 2026, ແລະ ສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 116 ປີ. ໃຫ້ກຽດເປັນປະທານ ໂດຍ ສະຫາຍ ປອ ວາລະໄຊ ເລັ່ງສະຫວັດ, ກໍາມະການສໍາຮອງສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າ ຄຕພ, ຜູ້ ຊີ້ນໍາວຽກງານອົງການ ຈັດຕັ້ງມະຫາຊົນ ແລະ ສະຫາຍ ນາງ ສຸກສະຫວັນ ແກ້ວວິໄລວັນ, ປະທານສະຫະພັນແມ່ຍິງ

ຄຕພ, ມີບັນດາສະຫາຍຄະນະບໍລິຫານງານສະຫະພັນແມ່ຍິງ, ຕາງໜ້າສະຫະພັນກຳມະບານ ແລະ ຊາວໜຸ່ມ, ພ້ອມດ້ວຍສະມາຊິກຂອງ ສາມອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ນາງ ສຸກສະຫວັນ ແກ້ວວິໄລວັນ, ປະທານສະຫະພັນແມ່ຍິງ ຄຕພ ໄດ້ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ ຂອງສະຫະພັນແມ່ຍິງ ຄຕພ ໄລຍະປີ 2025 ແລະ ທິດທາງແຜນການປີ 2026, ເຊິ່ງໄດ້ຕີລາຄາ ດ້ານດີ, ດ້ານຄົງຄ້າງ, ສາເຫດ, ບົດຮຽນທີ່ຖອດຖອນໄດ້ໃນການນຳພາ-ຊີ້ນຳໄລຍະໜຶ່ງປີຜ່ານມາ ແລະ ວາງແຜນການທິດທາງໃນຕໍ່ໜ້າ; ຈາກນັ້ນ, ກໍໄດ້ສືບຕໍ່ ທວນຄືນມູນເຊື້ອປະຫວັດຄວາມເປັນມາຂອງວັນທີ 08 ມີນາ ໃນພາລະກິດຕໍ່ສູ້ຕ້ານກັບການກົດຂີ່ຂູດຮີດ ຂອງຊົນຊັ້ນນາຍທຶນ, ທວງເອົາສິດຜົນປະໂຫຍດອັນເປັນທຳມາສູ່ແມ່ຍິງ, ຍົກໃຫ້ເຫັນຄວາມສຳຄັນ ແລະ ການເຄື່ອນໄຫວຂອງແມ່ຍິງໃນກອງປະຊຸມຕ່າງໆໃນລະດັບ ສາກົນ, ພາກພື້ນ ແລະ ອາຊຽນ, ນະໂຍບາຍ ແລະ ກົນໄກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງໃນ ສປປ ລາວ, ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ.

ໃນໂອກາດທີ່ມີຄວາມໝາຍສຳຄັນ, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມ ຈາກ ສະຫາຍ ປອ ວາລະໄຊ ເລັ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າ ຄຕພ, ເຊິ່ງສະຫາຍ ໄດ້ເນັ້ນໜັກໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ນຳເອົາເນື້ອໃນຈິດໃຈ ຂອງມະຕິກອງປະຊຸມສະຫະພັນແມ່ຍິງທົ່ວປະເທດ ຄັ້ງທີ IX ແລະ ມະຕິກອງປະຊຸມສະຫະພັນແມ່ຍິງ ຄຕພ ຄັ້ງທີ III, ໄປຈັດຕັ້ງຜັນຂະຫຍາຍ ເຂົ້າສູ່ວຽກງານຕົວຈິງ ໃຫ້ໄດ້ຮັບຜົນດີຮອບດ້ານ, ເພື່ອໃຫ້ສົມກັບນາມມະຍົດແມ່ຍິງລາວຍຸກໃໝ່ເປັນກຳລັງແຮງສືບທອດມູນເຊື້ອ ແລະ ອຸດົມການຂອງພັກ, ຮັກສາມູນເຊື້ອວັດທະນະທຳອັນດີງາມຂອງຊາດ. ຕອນທ້າຍພິທີ ຍັງໄດ້ມອບໃບຍັ້ງຢືນການຮັກສານາມມະຍົດທຸງໄຊ 3 ດີ ສະໄໝທີ II, ເຊິ່ງເປັນກຳລັງແຮງໃຈ ໃຫ້ແກ່ເອື້ອຍ-ນ້ອງແມ່ຍິງ ໃນການບຸກບືນປະກອບສ່ວນເຮື່ອແຮງເຂົ້າໃນວຽກງານ ແລະ ຂະບວນການຂອງສະຫະພັນແມ່ຍິງລາວ.